ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 116 /ລບ

ນະຄອນຫຼວງວຽງຈັນ, ວັນທີ 22.04.2019.

# ດຳລັດ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມລັດຖະດຳລັດ ຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 011/ປປທ, ລົງວັນທີ 20/1/2010 ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍທົ່ວປະເທດ ໃນໄລຍະໃໝ່;
- ອີງຕາມ ໜັງສືສະເໜີ ສະບັບເລກທີ 120/ພນ, ລົງວັນທີ 10 ເມສາ 2019 ຂອງກະຊວງພາຍໃນ.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວວຽກງານແຂ່ງຂັນ ແລະ ຍ້ອງຍໍ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ສ້າງເງື່ອນໄຂ, ຊຸກຍູ້, ສົ່ງເສີມຫົວຄິດປະດິດສ້າງ ແລະ ຜົນງານດີເດັ່ນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຂົ້າຮ່ວມໃນການແຂ່ງຂັນ ແລະ ຍ້ອງຍໍ ໃຫ້ເປັນຂະບວນການແຂງແຮງ, ກວ້າງຂວາງ ແລະ ເລິກເຊິ່ງ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການແຂ່ງຂັນ ແລະ ຍ້ອງຍໍ**

ການແຂ່ງຂັນ ແມ່ນການເຄື່ອນໄຫວທີ່ມີການຈັດຕັ້ງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ເພື່ອປຸກລະດົມເຕົ້າໂຮມກຳລັງແຮງແຂ່ງຂັນ, ເສີມຂະຫຍາຍຫົວຄິດປະດິດສ້າງ, ຈັດຕັ້ງປະຕິບັດໜ້າທີ່ວຽກງານສ້າງຜົນງານດີເດັ່ນ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ການຍ້ອງຍໍ ແມ່ນການສັນລະເສີນຄຸນງາມຄວາມດີ ແລະ ຈົດຈຳບຸນຄຸນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ມາດຕາ 3 ຫຼັກການຂອງການແຂ່ງຂັນ ແລະ ຍ້ອງຍໍ

ການແຂ່ງຂັນ ແລະ ຍ້ອງຍໍໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນການປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ;
2. ຮັບປະກັນການມີສ່ວນຮ່ວມຂອງທຸກຊັ້ນຄົນໃນສັງຄົມເຂົ້າຮ່ວມການແຂ່ງຂັນ ແລະ ຍ້ອງຍໍ;
3. ຊັດເຈນ, ເປີດເຜີຍ, ສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ທັນການ;
4. ຮັບປະກັນຄວາມເປັນເອກະພາບ ລະຫວ່າງ ເນື້ອໃນ, ຮູບການ ແລະ ເປົ້າໝາຍການຍ້ອງຍໍ.
5. ປະສານສົມທົບ ລະຫວ່າງ ການປຸກລະດົມທາງດ້ານຈິດໃຈ ແລະ ການກະຕຸກຊຸກຍູ້ທາງດ້ານວັດຖຸ;

ມາດຕາ 4 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ຢູ່ ສປປ ລາວ.

## ໝວດທີ 2
## ການແຂ່ງຂັນ

ມາດຕາ 5 ເປົ້າໝາຍການແຂ່ງຂັນ

ເປົ້າໝາຍການແຂ່ງຂັນ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງ ສປປ ລາວ ທີ່ຢູ່ພາຍໃນ ຫຼື ຢູ່ຕ່າງປະເທດ.

ມາດຕາ 6 ຮູບການແຂ່ງຂັນ

ການແຂ່ງຂັນມີ ສອງ ຮູບການ ດັ່ງນີ້:

1. ແຂ່ງຂັນປົກກະຕິ ແມ່ນການແຂ່ງຂັນຕາມພາລະບົດບາດ, ໜ້າທີ່ຂອງແຕ່ລະກະຊວງ, ອົງການ ແລະ ທ້ອງຖິ່ນ;
2. ແຂ່ງຂັນຕາມບັ້ນ ແມ່ນການແຂ່ງຂັນ ປະຕິບັດໜ້າທີ່ວຽກງານທີ່ສຳຄັນໃດໜຶ່ງ ທີ່ໄດ້ກຳນົດໄລຍະເວລາລະອຽດ ຫຼື ການແຂ່ງຂັນຕາມມະຕິ, ຄຳສັ່ງ ຂອງຂັ້ນເທິງ ທີ່ໄດ້ກຳນົດ.

ມາດຕາ 7 ຂອບເຂດການແຂ່ງຂັນ

ຂອບເຂດການແຂ່ງຂັນ ມີ ດັ່ງນີ້:

1. ການແຂ່ງຂັນໃນຂອບເຂດທົ່ວປະເທດ;
2. ການແຂ່ງຂັນໃນຂອບເຂດກະຊວງ, ອົງການ ແລະ ທ້ອງຖິ່ນ.

ມາດຕາ 8 ຄາດໝາຍການແຂ່ງຂັນ

ການແຂ່ງຂັນ ຕ້ອງຕັ້ງໜ້າ, ສູ້ຊົນ, ບຸກບືນໃຫ້ໄດ້ ສີ່ ຄາດໝາຍ ດັ່ງນີ້:

1. ຕ້ອງສູ້ຊົນໃຫ້ສຳເລັດຕາມກຳນົດເວລາ ຫຼື ສຳເລັດກ່ອນກຳນົດເວລາທີ່ວາງໄວ້;
2. ຕ້ອງຮັບປະກັນໃຫ້ມີຜົນສຳເລັດດີເດັ່ນ, ໜັກແໜ້ນ, ມີຄຸນນະພາບ, ໄດ້ມາດຕະຖານ, ສາມາດແກ້ງແຍ້ງ ແລະ ໄດ້ຮັບຄວາມນິຍົມຈາກສັງຄົມ;
3. ຕ້ອງຮັບປະກັນໃຫ້ໄດ້ຕາມຄາດໝາຍ ຫຼື ລື່ນຄາດໝາຍທີ່ວາງໄວ້ ແລະ ມີການຂະຫຍາຍຕົວຫຼາຍຂຶ້ນເລື້ອຍໆ;
4. ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ມາດຕາ 9 ເນື້ອໃນການແຂ່ງຂັນ

ເນື້ອໃນການແຂ່ງຂັນ ຕ້ອງຮັບປະກັນສູ້ຊົນປະຕິບັດ ສອງໜ້າທີ່ຍຸດທະສາດ: ປົກປັກຮັກສາ ແລະ ພັດທະນາປະເທດຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພາຍໃຕ້ຄຳຂວັນ: " ຮັກຊາດ ແລະ ພັດທະນາ ".

ມາດຕາ 10 ຂັ້ນຕອນການແຂ່ງຂັນ

ການແຂ່ງຂັນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ວາງແຜນການແຂ່ງຂັນ ໂດຍມີການກຳນົດຈຸດປະສົງ, ຄາດໝາຍ, ຂອບເຂດ, ເປົ້າໝາຍ, ເນື້ອໃນ, ຄຳຂວັນ, ໄລຍະເວລາ, ວິທີການ, ເງື່ອນໄຂ ແລະ ມາດຕະຖານຂອງການແຂ່ງຂັນ;
2. ແຕ່ງຕັ້ງຄະນະຮັບຜິດຊອບການແຂ່ງຂັນ;
3. ເປີດຂະບວນການແຂ່ງຂັນ, ປຸກລະດົມ, ຊຸກຍູ້ ແລະ ຊີ້ນຳຂະບວນການແຂ່ງຂັນ;
4. ຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການແຂ່ງຂັນ;
5. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ສະເໜີຍ້ອງຍໍຜົນສຳເລັດຂອງການແຂ່ງຂັນ.

## ໝວດທີ 3
### ການຍ້ອງຍໍ

ມາດຕາ 11 ເປົ້າໝາຍການຍ້ອງຍໍ

ເປົ້າໝາຍການຍ້ອງຍໍ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ຫຼື ຕ່າງປະເທດ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ.

ມາດຕາ 12 ບ່ອນອີງການຍ້ອງຍໍ

ບ່ອນອີງຂອງການຍ້ອງຍໍ ມີ ດັ່ງນີ້:

1. ມະຕິ, ຄຳສັ່ງ, ຂໍ້ຕົກລົງເປີດຂະບວນການແຂ່ງຂັນ;
2. ຂະບວນການແຂ່ງຂັນ ໃນແຕ່ລະໄລຍະທີ່ແນ່ນອນ ບົນພື້ນຖານແຜນການ, ແຜນງານ, ໂຄງການຂອງການແຂ່ງຂັນທີ່ໄດ້ກຳນົດໄວ້;
3. ຜົນງານຕົວຈິງ ແລະ ຜົນສຳເລັດດີເດັ່ນ ຂອງການແຂ່ງຂັນ;
4. ສະພາບຈຸດພິເສດດ້ານທີ່ຕັ້ງ, ເງື່ອນໄຂ, ກາລະໂອກາດ ແລະ ສະພາບແວດລ້ອມອື່ນ ຂອງການປະຕິບັດວຽກງານທີ່ໄດ້ຮັບມອບໝາຍ.

ມາດຕາ 13 ຮູບການຍ້ອງຍໍ

ການຍ້ອງຍໍ ປະກອບ ມີ ສາມຮູບການ ດັ່ງນີ້:

1. ຍ້ອງຍໍປົກກະຕິ: ແມ່ນການຍ້ອງຍໍ ຂອງກະຊວງ, ອົງການ, ທ້ອງຖິ່ນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມຂະບວນການແຂ່ງຂັນໃນການປະຕິບັດໜ້າທີ່ວຽກງານປະຈຳປີ; ເມື່ອຮອດ ຫ້າປີ ຈຶ່ງໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ສະເໜີໃຫ້ຄະນະຊີ້ນຳລະດັບຊາດ ກ່ຽວກັບການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ພິຈາລະນາການຍ້ອງຍໍ ໃນຂອບເຂດທົ່ວປະເທດ;
2. ຍ້ອງຍໍຕາມບັ້ນ: ແມ່ນການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບການມອບໝາຍໃຫ້ປະຕິບັດໜ້າທີ່ວຽກງານ ໃນບັ້ນໃດບັ້ນໜຶ່ງ ທີ່ມີຜົນງານດີເດັ່ນ ແລະ ມີຜົນສຳເລັດ; ບັນດາບັ້ນ, ໂຄງການ ທີ່ລັດຖະບານ ໄດ້ມີມະຕິ, ຄຳສັ່ງ ແລະ ຮັບຮອງເປັນທາງການ;

3. ຍ້ອງຍໍບັງເອີນ: ແມ່ນການຍ້ອງຍໍຕາມເຫດການທີ່ເກີດຂຶ້ນໂດຍບັງເອີນ ຫຼື ການຍ້ອງຍໍທີ່ມີລັກສະນະ ຮີບດ່ວນ ຂອງສູນກາງພັກ ແລະ ລັດຖະບານ.

ມາດຕາ 14 ປະເພດການຍ້ອງຍໍ

ກ. ຫຼຽນລະດັບສູງ

1. ຫຼຽນຄຳແຫ່ງຊາດ;
2. ຫຼຽນໂພໄຊລ້ານຊ້າງ;
3. ຫຼຽນກຽດຕິຄຸນ.

ຂ. ຫຼຽນໄຊ

1. ຫຼຽນໄຊອິດສະຫຼະ ຊັ້ນ I, ຊັ້ນ II ແລະ ຊັ້ນ III;
2. ຫຼຽນໄຊຊະນະເລີດ ຊັ້ນ I, ຊັ້ນ II ແລະ ຊັ້ນ III;
3. ຫຼຽນໄຊພິລະອາດຫານ ຊັ້ນ I, ຊັ້ນ II ແລະ ຊັ້ນ III;
4. ຫຼຽນໄຊແຮງງານ ຊັ້ນ I, ຊັ້ນ II ແລະ ຊັ້ນ III;
5. ຫຼຽນໄຊພັດທະນາ ຊັ້ນ I, ຊັ້ນ II ແລະ ຊັ້ນ III;
6. ຫຼຽນໄຊມິດຕະພາບ.

ຄ. ຫຼຽນນາມມະຍົດ

1. ຫຼຽນນາມມະຍົດວິລະຊົນແຫ່ງຊາດ;
2. ຫຼຽນນາມມະຍົດວິລະຊົນແຮງງານ;
3. ຫຼຽນນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ;
4. ຫຼຽນນາມມະຍົດພັດທະນາດີເດັ່ນແຫ່ງຊາດ;
5. ຫຼຽນນາມມະຍົດສິລະປິນແຫ່ງຊາດ;
6. ຫຼຽນນາມມະຍົດຄູແຫ່ງຊາດ;
7. ຫຼຽນນາມມະຍົດແພດແຫ່ງຊາດ;
8. ຫຼຽນນາມມະຍົດສິລະປິນດີເດັ່ນ;
9. ຫຼຽນນາມມະຍົດຄູປະຊາຊົນ;
10. ຫຼຽນນາມມະຍົດແພດປະຊາຊົນ;
11. ຫຼຽນນາມມະຍົດແມ່ພັດທະນາດີເດັ່ນ;
12. ນາມມະຍົດພັດທະນາດີເດັ່ນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ;
13. ນາມມະຍົດພັດທະນາດີເດັ່ນຂອງເມືອງ, ເທດສະບານ ແລະ ນະຄອນ.

ງ. ທຸງໄຊ

1. ທຸງໄຊແຂ່ງຂັນລັດຖະບານ;
2. ທຸງໄຊແຂ່ງຂັນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ.

ຈ. ຫຼຽນກາ

1. ຫຼຽນກາພັດທະນາ;
2. ຫຼຽນກາແຮງງານ;
3. ຫຼຽນກາມິດຕະພາບ;

4. ຫຼຽນກາລະນຶກ;
5. ຫຼຽນກາລະນຶກຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ.

ສ. ໃບສັນລະເສີນ

1. ໃບປະເທດຊາດຈາລຶກບຸນຄຸນ;
2. ໃບຍ້ອງຍໍລັດຖະບານ;
3. ໃບຍ້ອງຍໍ, ໃບຊົມເຊີຍ ຂອງກະຊວງ, ອົງການ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ ແລະ ນະຄອນ.

## ໝວດທີ 4
### ຄຸນຄ່າ ແລະ ມາດຕະຖານຂອງປະເພດການຍ້ອງຍໍ

**ມາດຕາ 15 ຫຼຽນຄໍາແຫ່ງຊາດ**

ຫຼຽນຄໍາແຫ່ງຊາດ ເປັນຫຼຽນທີ່ມີຄຸນຄ່າສູງສຸດຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ ບຸກຄົນ ຫຼື ການຈັດຕັ້ງ ສປປ ລາວ ຫຼື ຕ່າງປະເທດ.

❖ ມາດຕະຖານຂອງບຸກຄົນ ທີ່ເປັນພົນລະເມືອງລາວ ທີ່ຈະໄດ້ຮັບຫຼຽນຄໍາແຫ່ງຊາດ ມີ ດັ່ງນີ້:

1. ປະທານພັກ ຫຼື ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ;

   ປະທານສູນກາງແນວລາວສ້າງຊາດ, ຮອງປະທານປະເທດ, ຮອງປະທານສະພາແຫ່ງຊາດ ແລະ ຮອງນາຍົກລັດຖະມົນຕີ ທີ່ດໍາລົງຕໍາແໜ່ງກໍາມະການກົມການເມືອງສູນກາງພັກ;
2. ຜູ້ທີ່ມີຜົນງານໃຫຍ່ຫຼວງ, ຄຸນງາມຄວາມດີ, ດີເດັ່ນພິເສດ, ມີຜົນສໍາເລັດໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍແຕ່ລະໄລຍະ, ໄດ້ອຸທິດເຫື່ອແຮງ, ສະຕິປັນຍາຂອງຕົນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດຕະຫຼອດມາ;
3. ໄດ້ເຂົ້າຮ່ວມເຄື່ອນໄຫວການປະຕິວັດລຽນຕິດແຕ່ ຫ້າສິບປີ ຂຶ້ນໄປ.

❖ ມາດຕະຖານຂອງການຈັດຕັ້ງ ຂອງ ສປປ ລາວ ທີ່ຈະໄດ້ຮັບຫຼຽນຄໍາແຫ່ງຊາດ ມີ ດັ່ງນີ້:

1. ສ້າງໄດ້ຜົນງານດີເດັ່ນເປັນພິເສດຢ່າງຕໍ່ເນື່ອງ ເປັນໄລຍະ ຫ້າສິບປີ ຂຶ້ນໄປ ແລະ ໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ I ມາກ່ອນ;
2. ການຈັດຕັ້ງ ທີ່ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ;

   ການຈັດຕັ້ງດັ່ງກ່າວ ຈະໄດ້ຮັບຫຼຽນຄໍາແຫ່ງຊາດ ຄັ້ງຕໍ່ໄປໄດ້ ຖ້າມີຜົນງານດີເດັ່ນພິເສດລຽນຕິດ, ຕໍ່ເນື່ອງ ຊາວຫ້າປີ ຂຶ້ນໄປ.

❖ ມາດຕະຖານຂອງບຸກຄົນ ແລະ ການຈັດຕັ້ງ ຂອງຕ່າງປະເທດ ທີ່ຈະໄດ້ຮັບຫຼຽນຄໍາແຫ່ງຊາດ ມີ ດັ່ງນີ້:

1. ຜູ້ທີ່ມີຜົນງານໃຫຍ່ຫຼວງ, ມີຄຸນງາມຄວາມດີ ໃນການປະກອບສ່ວນເສີມສ້າງ, ປົກປັກຮັກສາສາຍພົວພັນມິດຕະພາບທີ່ດີ ຕໍ່ ສປປ ລາວ.
2. ການຈັດຕັ້ງ ທີ່ມີຜົນງານໃຫຍ່ຫຼວງ, ດີເດັ່ນພິເສດຕໍ່ສາຍພົວພັນມິດຕະພາບ, ການຮ່ວມມືດ້ານຕ່າງໆ ກັບ ສປປ ລາວ.

ມາດຕາ 16 ຫຼຽນໂພໄຊລ້ານຊ້າງ

ຫຼຽນໂພໄຊລ້ານຊ້າງ ເປັນຫຼຽນທີ່ມີຄຸນຄ່າຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ ພະມະຫາກະສັດ ປະມຸກລັດ ຂອງຕ່າງປະເທດ ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ ປະກອບສ່ວນໃນການເສີມສ້າງ, ປົກປັກ ຮັກສາສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມ ຕໍ່ ສປປ ລາວ.

ມາດຕາ 17 ຫຼຽນກຽດຕິຄຸນ

ຫຼຽນກຽດຕິຄຸນ ເປັນຫຼຽນທີ່ມີຄຸນຄ່າຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ ພະມະຫາກະສັດ, ປະມຸກ ລັດ, ພະບຸຣິມວົງສານຸວົງ, ນາຍົກລັດຖະມົນຕີ ຂອງຕ່າງປະເທດ ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ ປະກອບສ່ວນໃນການເສີມສ້າງ, ປົກປັກຮັກສາສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມ ຕໍ່ ສປປ ລາວ.

ມາດຕາ 18 ຫຼຽນໄຊອິດສະຫຼະ

ຫຼຽນໄຊອິດສະຫຼະ ເປັນຫຼຽນທີ່ມີຄຸນຄ່າຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ ບຸກຄົນ, ນິຕິບຸກ ຄົນ ແລະ ການຈັດຕັ້ງ ຂອງ ສປປ ລາວ ຫຼື ຕ່າງປະເທດ ຕາມມາດຕະຖານຕ່າງໆ ດັ່ງນີ້:

- ມາດຕະຖານຂອງບຸກຄົນ ທີ່ເປັນພົນລະເມືອງລາວ ທີ່ຈະໄດ້ຮັບຫຼຽນໄຊອິດສະຫຼະແຕ່ລະຊັ້ນ ມີ:

1. ຜູ້ທີ່ມີຜົນງານດີເດັ່ນຮອບດ້ານ, ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວິວັດໃນການປະກອບສ່ວນ ທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ II ມາແລ້ວ ສິບປີຂຶ້ນໄປ ຈະໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ I ຍົກເວັ້ນກໍລະນີພິເສດ;
2. ຜູ້ທີ່ມີຜົນງານດີເດັ່ນຮອບດ້ານ, ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວິວັດໃນການປະກອບສ່ວນ ທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ III ມາແລ້ວ ສິບປີຂຶ້ນໄປ ຈະໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ II ຍົກເວັ້ນກໍລະນີພິເສດ;
3. ຜູ້ທີ່ມີຜົນງານດີເດັ່ນຮອບດ້ານ, ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວິວັດໃນການປະກອບສ່ວນ ທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ຢ່າງໜ້ອຍ ສິບປີຂຶ້ນໄປ ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ III ຍົກເວັ້ນກໍລະນີພິເສດ.

- ມາດຕະຖານຂອງນິຕິບຸກຄົນ ແລະ ການຈັດຕັ້ງ ຂອງ ສປປ ລາວ ທີ່ຈະໄດ້ຮັບຫຼຽນໄຊອິດ ສະຫຼະ ແຕ່ ລະຊັ້ນ ມີ :

1. ເປັນການຈັດຕັ້ງ ທີ່ມີຜົນງານດີເດັ່ນຮອບດ້ານ, ຕໍ່ເນື່ອງ, ລຽນຕິດ ແລະ ໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ II ມາແລ້ວ ສິບປີຂຶ້ນໄປ ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ I ຍົກເວັ້ນກໍລະນີພິເສດ;
2. ເປັນການຈັດຕັ້ງ ທີ່ມີຜົນງານດີເດັ່ນຮອບດ້ານ, ຕໍ່ເນື່ອງ, ລຽນຕິດ ແລະ ໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ III ມາແລ້ວ ສິບປີຂຶ້ນໄປ ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ II ຍົກເວັ້ນກໍລະນີພິເສດ;
3. ເປັນການຈັດຕັ້ງ ທີ່ມີຜົນງານດີເດັ່ນຮອບດ້ານ, ຕໍ່ເນື່ອງ, ລຽນຕິດ ແລະ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ຢ່າງໜ້ອຍ ສິບປີຂຶ້ນໄປ ຈະໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ III ຍົກເວັ້ນກໍລະນີພິເສດ.

- ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງປະເທດ ທີ່ຈະໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ I, II ແລະ ຊັ້ນ III ຕ້ອງແມ່ນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃຫຍ່ຫຼວງ, ມີຄຸນງາມ

ຄວາມດີ ໃນການປະກອບສ່ວນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ, ເສີມຂະຫຍາຍສາຍພົວພັນມິດຕະພາບ, ການຮ່ວມມືທີ່ດີ ຕໍ່ ສປປ ລາວ.

ມາດຕາ 19 ຫຼຽນໄຊຊະນະເລີດ

ຫຼຽນໄຊຊະນະເລີດ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ ທີ່ມີຜົນງານພົ້ນເດັ່ນ, ຫ້າວຫັນບຸກບືນເຮັດສຳເລັດໜ້າທີ່, ອຸທິດເຫື່ອແຮງ, ສະຕິປັນຍາເຂົ້າໃນພາລະກິດປະຕິວັດປົດປ່ອຍຊາດ ແລະ ປົກປັກຮັກສາປະເທດຊາດ.

ຜູ້ທີ່ຈະໄດ້ຮັບຫຼຽນໄຊຊະນະເລີດ ຊັ້ນ I, II ແລະ ຊັ້ນ III ຕ້ອງມີການເລືອກເຟັ້ນຕາມຜົນງານຕົວຈິງ ໃຫ້ເໝາະສົມກັບແຕ່ລະຊັ້ນ.

ມາດຕາ 20 ຫຼຽນໄຊພິລະອາດຫານ

ຫຼຽນໄຊພິລະອາດຫານ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ, ມີນ້ຳໃຈພິລະອາດຫານໃນການສູ້ຮົບ, ຮັບໃຊ້ສູ້ຮົບ, ກ້າຫານກອບກູ້ເອົາຄົນ, ກອບກູ້ເອົາຊັບສົມບັດຂອງລັດ, ຂອງປະຊາຊົນ, ເປັນຜູ້ທີ່ມີຄຸນນະທຳດີ.

ຜູ້ທີ່ຈະໄດ້ຮັບຫຼຽນໄຊພິລະອາດຫານ ຊັ້ນ I, II ແລະ ຊັ້ນ III ຕ້ອງມີການເລືອກເຟັ້ນຕາມຜົນງານຕົວຈິງ ໃຫ້ເໝາະສົມກັບແຕ່ລະຊັ້ນ.

ມາດຕາ 21 ຫຼຽນໄຊແຮງງານ

ຫຼຽນໄຊແຮງງານ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຂອງ ສປປ ລາວ ຫຼື ຕ່າງປະເທດ ຕາມມາດຕະຖານຕ່າງໆ ດັ່ງນີ້:

- ມາດຕະຖານຂອງບຸກຄົນ ທີ່ເປັນພົນລະເມືອງລາວ ທີ່ຈະໄດ້ຮັບຫຼຽນໄຊແຮງງານ ແຕ່ລະຊັ້ນ ມີ:

1. ຜູ້ທີ່ມີຜົນງານດີເດັ່ນ, ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວີວັດ ໃນການປະກອບສ່ວນທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ມາແລ້ວ ຫ້າປີ ຂຶ້ນໄປ ຈະໄດ້ຮັບຫຼຽນໄຊແຮງງານຊັ້ນ I ຍົກເວັ້ນກໍລະນີພິເສດ;
2. ຜູ້ທີ່ມີຜົນງານດີເດັ່ນ, ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວີວັດ ໃນການປະກອບສ່ວນທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ມາແລ້ວ ຫ້າປີ ຂຶ້ນໄປ ຈະໄດ້ຮັບຫຼຽນໄຊແຮງງານຊັ້ນ II ຍົກເວັ້ນກໍລະນີພິເສດ;
3. ຜູ້ທີ່ມີຜົນງານດີເດັ່ນ, ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວີວັດ ໃນການປະກອບສ່ວນທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນກາແຮງງານ ມາແລ້ວ ຫ້າປີ ຂຶ້ນໄປ ຈະໄດ້ຮັບຫຼຽນໄຊແຮງງານຊັ້ນ III ຍົກເວັ້ນກໍລະນີພິເສດ.

- ມາດຕະຖານຂອງນິຕິບຸກຄົນ ແລະ ການຈັດຕັ້ງ ຂອງ ສປປ ລາວ ທີ່ຈະໄດ້ຮັບຫຼຽນໄຊແຮງງານ ແຕ່ລະຊັ້ນ ມີ:

1. ເປັນການຈັດຕັ້ງ ທີ່ມີຜົນງານດີເດັ່ນ ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວີວັດ ໃນການປະກອບສ່ວນທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດ

ຊາດ ແລະ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ມາແລ້ວ ສິບປີ ຂຶ້ນໄປ ຈະໄດ້ຮັບຫຼຽນໄຊແຮງງານຊັ້ນ I ຍົກເວັ້ນກໍລະນີພິເສດ;

2. ເປັນການຈັດຕັ້ງ ທີ່ມີຜົນງານດີເດັ່ນ ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວີລະ ໃນການປະກອບສ່ວນທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ມາແລ້ວ ສິບປີ ຂຶ້ນໄປ ຈະໄດ້ຮັບຫຼຽນໄຊແຮງງານຊັ້ນ II ຍົກເວັ້ນກໍລະນີພິເສດ;

3. ເປັນການຈັດຕັ້ງ ທີ່ມີຜົນງານດີເດັ່ນ ຕໍ່ເນື່ອງ, ລຽນຕິດ ຫຼື ມີຂະບວນການວີລະ ໃນການປະກອບສ່ວນທາງດ້ານສະຕິປັນຍາ, ອຸທິດເຫື່ອແຮງ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ໄດ້ຮັບຫຼຽນກາແຮງງານ ມາແລ້ວ ສິບປີ ຂຶ້ນໄປ ຈະໄດ້ຮັບຫຼຽນໄຊແຮງງານຊັ້ນ III ຍົກເວັ້ນກໍລະນີພິເສດ.

❖ ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງປະເທດ ທີ່ຈະໄດ້ຮັບຫຼຽນໄຊແຮງງານ ຊັ້ນ I, II ແລະ ຊັ້ນ III ຕ້ອງແມ່ນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຜົນງານໃຫຍ່ຫຼວງ, ມີຄຸນງາມຄວາມດີ ໃນການປະກອບສ່ວນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ, ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີ ຕໍ່ ສປປ ລາວ.

### ມາດຕາ 22 ຫຼຽນໄຊພັດທະນາ

ຫຼຽນໄຊພັດທະນາ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ ທີ່ມີຜົນງານ, ຄຸນງາມຄວາມດີ ປະກອບສ່ວນຊ່ວຍເຫຼືອລ້າທາງດ້ານວັດຖຸ, ທຶນຮອນ, ເງິນຄໍາ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ ຍົກເວັ້ນລັດວິສາຫະກິດ.

### ມາດຕາ 23 ຫຼຽນໄຊມິດຕະພາບ

ຫຼຽນໄຊມິດຕະພາບ ເປັນຫຼຽນທີ່ມີຄຸນຄ່າສະເພາະຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງປະເທດ ທີ່ມີຜົນງານດີເດັ່ນ, ຄຸນງາມຄວາມດີ ປະກອບສ່ວນທາງດ້ານເຫື່ອແຮງ, ສະຕິປັນຍາ, ທຶນຮອນ ເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີ ຕໍ່ ສປປ ລາວ.

### ມາດຕາ 24 ຫຼຽນນາມມະຍົດວິລະຊົນແຫ່ງຊາດ

ຫຼຽນນາມມະຍົດວິລະຊົນແຫ່ງຊາດ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ ແລະ ການຈັດຕັ້ງ.

❖ ມາດຕະຖານຂອງບຸກຄົນ ແລະ ການຈັດຕັ້ງ ທີ່ຈະໄດ້ຮັບຫຼຽນນາມມະຍົດວິລະຊົນແຫ່ງຊາດ ມີ ດັ່ງນີ້:

1. ຜູ້ທີ່ມີຜົນງານດີເດັ່ນ, ໃຫຍ່ຫຼວງເປັນພິເສດ, ກ້າຫານ, ຍອມເສຍສະຫຼະຊີວິດ, ເລືອດເນື້ອເພື່ອປະເທດຊາດ, ຕັດສິນໃຈເຮັດສໍາເລັດໜ້າທີ່ໃດໜຶ່ງ, ມີຄວາມອົດທົນໜັງວແໜ້ນ, ຕັ້ງໜ້າສູ້ຊົນປະຕິບັດໜ້າທີ່ຢ່າງບໍ່ຮູ້ອິດບໍ່ຮູ້ເມື່ອຍ ແລະ ມີຜົນສໍາເລັດດີເດັ່ນ ໃນການປະຕິບັດໜ້າທີ່ວຽກງານບໍ່ວ່າໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ເຕັກນິກວິທະຍາສາດ, ເຕັກໂນໂລຊີ ແລະ ການຕ່າງປະເທດ ເປັນຜູ້ທີ່ມີຄຸນທາດການ

ເມືອງ, ມີຄຸນສົມບັດສິນທຳປະຕິວັດໜັກແໜ້ນ, ມີຄວາມສັດຊື່ບໍລິສຸດ, ຈົງຮັກພັກ ດີຕໍ່ຊາດຕໍ່ປະຊາຊົນ, ມີຄວາມຮູ້-ຄວາມສາມາດ;

2. ເປັນການຈັດຕັ້ງ ທີ່ສ້າງຂຶ້ນຖືກຕ້ອງຕາມກົດໝາຍ ທີ່ມີຜົນງານໃຫຍ່ຫຼວງ, ດີເດັ່ນເປັນພິເສດ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ເປັນການຈັດຕັ້ງທີ່ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ມີຂະບວນວິວັດເຄື່ອນໄຫວ, ມີຜົນສຳເລັດດີເດັ່ນລຽນຕິດແຕ່ລະໄລຍະ.

### ມາດຕາ 25 ຫຼຽນນາມມະຍົດວິລະຊົນແຮງງານ

ຫຼຽນນາມມະຍົດວິລະຊົນແຮງງານ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ຕາມມາດຕະຖານຕ່າງໆ ດັ່ງນີ້:

1. ຜູ້ທີ່ມີຜົນງານດີເດັ່ນເປັນພິເສດ, ມີຄຸນງາມຄວາມດີ, ອຸທິດເຫື່ອແຮງ, ສະຕິປັນຍາເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ດຸໝັ່ນໃນການຄົ້ນຄວ້າ, ການອອກແຮງງານ, ມີສີມືແຮງງານທີ່ດີ ແລະ ຜູ້ສາມາດສ້າງໄດ້ນະວັດຕະກຳອັນໃໝ່ ຊຶ່ງສະພາວິທະຍາສາດແຫ່ງຊາດໄດ້ຮັບຮອງ;
2. ເປັນນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍ, ມີຜົນງານດີເດັ່ນເປັນພິເສດ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ມີບຸກຄະລາກອນດຸໝັ່ນໃນການຄົ້ນຄວ້າ, ການອອກແຮງງານ ແລະ ສ້າງໄດ້ນະວັດຕະກຳອັນໃໝ່ ຊຶ່ງສະພາວິທະຍາສາດແຫ່ງຊາດໄດ້ຮັບຮອງ ແລະ ໄດ້ຮັບນາມມະຍົດພັດທະນາດີເດັ່ນແຫ່ງຊາດ.

### ມາດຕາ 26 ຫຼຽນນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ

ຫຼຽນນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນເປັນພິເສດ, ມີຄວາມສາມາດ, ອົງອາດກ້າຫານເປັນພິເສດ, ປະກອບສ່ວນທາງດ້ານເຫື່ອແຮງ, ສະຕິປັນຍາ ແລະ ເລືອດເນື້ອເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 27 ຫຼຽນນາມມະຍົດພັດທະນາດີເດັ່ນແຫ່ງຊາດ

ຫຼຽນນາມມະຍົດພັດທະນາດີເດັ່ນແຫ່ງຊາດ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມມາດຕະຖານຕ່າງໆ ດັ່ງນີ້:

1. ຜູ້ທີ່ມີຜົນງານດີເດັ່ນ ໃນການອອກແຮງງານ, ຄົ້ນຄວ້າ, ປະດິດສ້າງສິ່ງໃໝ່, ນຳໃຊ້ເຕັກນິກ ຫຼື ເຕັກໂນໂລຊີອັນໃໝ່ ເພື່ອຮັບໃຊ້ສັງຄົມ, ຮັບໃຊ້ການຜະລິດ, ສາມາດຍົກສະມັດຕະພາບ ຂອງການຜະລິດສູງຂຶ້ນເລື້ອຍໆ, ຊື່ສັດບໍລິສຸດ ແລະ ເປັນແບບຢ່າງທີ່ດີເດັ່ນໃຫ້ຜູ້ອື່ນ, ໄດ້ຮັບນາມມະຍົດພັດທະນາດີເດັ່ນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ລຽນຕິດແຕ່ ສອງເທື່ອຂຶ້ນໄປ;
2. ເປັນນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍ, ມີຂະບວນວິວັດເຄື່ອນໄຫວວຽກງານດີເດັ່ນລຽນຕິດ, ປະດິດສ້າງ ແລະ ສ້າງໄດ້ຜະລິດຕະພັນທີ່ດີ, ມີຄຸນນະພາບຮັບໃຊ້ສັງຄົມ ຊຶ່ງສະພາວິທະຍາສາດແຫ່ງຊາດ ໄດ້ຮັບຮອງ; ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຊຶ່ງໄດ້ຮັບນາມມະຍົດ ເປັນການຈັດຕັ້ງພັດທະນາດີເດັ່ນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ລຽນຕິດແຕ່ ສາມເທື່ອຂຶ້ນໄປ.

ມາດຕາ 28 ຫຼຽນນາມມະຍົດສິລະປິນແຫ່ງຊາດ

ຫຼຽນນາມມະຍົດສິລະປິນແຫ່ງຊາດ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ສິລະປິນ ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີທັດສະນະຫຼັກໝັ້ນຊົນຊັ້ນກຳມະກອນ ແລະ ຄຸນສົມບັດສິນທຳປະຕິວັດໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ມີຄວາມຕື່ນຕົວ, ມີພອນສະຫວັນ, ມີຫົວຄິດປະດິດສ້າງ, ເປັນແບບຢ່າງທີ່ດີ, ມີປະສົບການ, ໄດ້ຜ່ານຂະບວນການວຽກງານສິລະປະວັດທະນະທຳ ແລະ ວິຊາອາຊີບ ແຕ່ ສິບຫ້າປີ ຂຶ້ນໄປ.

ມາດຕາ 29 ຫຼຽນນາມມະຍົດສິລະປິນດີເດັ່ນ

ຫຼຽນນາມມະຍົດສິລະປິນດີເດັ່ນ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ສິລະປິນ ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີທັດສະນະຫຼັກໝັ້ນຊົນຊັ້ນກຳມະກອນ ແລະ ມີຄຸນສົມບັດສິນທຳປະຕິວັດໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ມີຄວາມຕື່ນຕົວ, ມີພອນສະຫວັນ, ມີຫົວຄິດປະດິດສ້າງ, ເປັນແບບຢ່າງທີ່ດີ, ມີປະສົບການ, ໄດ້ຜ່ານຂະບວນການວຽກງານສິລະປະວັດທະນະທຳ ແລະ ວິຊາອາຊີບ ແຕ່ ສິບປີ ຂຶ້ນໄປ.

ມາດຕາ 30 ຫຼຽນນາມມະຍົດຄູແຫ່ງຊາດ

ຫຼຽນນາມມະຍົດຄູແຫ່ງຊາດ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ຄູທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນເປັນພິເສດ, ມີຄຸນສົມບັດ, ມີຄຸນນະທຳ, ມີຫຼັກໝັ້ນຊົນຊັ້ນກຳມະກອນ, ການເມືອງໜັກແໜ້ນ, ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນເປັນແບບຢ່າງທີ່ດີ, ມີປະສົບການ, ມີວິທີສິດສອນທີ່ດີ ສາມາດໃຫ້ຜູ້ອື່ນໄປພົນຂະຫຍາຍຢ່າງມີໝາກຜົນດີ ແລະ ເປັນທີ່ຍອມຮັບຂອງສັງຄົມ, ໄດ້ຜ່ານຂະບວນການສິດສອນ ແລະ ການຄຸ້ມຄອງນັກຮຽນ-ນັກສຶກສາ ແຕ່ ຊາວຫ້າປີ ຂຶ້ນໄປ.

ມາດຕາ 31 ຫຼຽນນາມມະຍົດຄູປະຊາຊົນ

ຫຼຽນນາມມະຍົດຄູປະຊາຊົນ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ຄູທີ່ມີຄຸນງາມ ຄວາມດີ, ມີຜົນງານດີເດັ່ນ, ມີຄຸນສົມບັດສິນທຳປະຕິວັດດີ, ມີຄຸນນະທຳ, ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນ, ເປັນແບບຢ່າງທີ່ດີ, ມີປະສົບການ, ໄດ້ຜ່ານຂະບວນການສິດສອນ ແລະ ການຄຸ້ມຄອງນັກຮຽນ-ນັກສຶກສາ ແຕ່ ຊາວປີ ຂຶ້ນໄປ.

ມາດຕາ 32 ຫຼຽນນາມມະຍົດແພດແຫ່ງຊາດ

ຫຼຽນນາມມະຍົດແພດແຫ່ງຊາດ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ແພດ ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີຄຸນສົມບັດສິນທຳປະຕິວັດດີ, ມີຄຸນນະທຳ, ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນ, ມີຈັນຍາບັນ, ເປັນແບບຢ່າງທີ່ດີ, ມີປະສົບການ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກມະຫາຊົນ ແລະ ໄດ້ຜ່ານຂະບວນການວຽກງານສາທາລະນະສຸກຢ່າງຕໍ່ເນື່ອງແຕ່ ຊາວຫ້າປີ ຂຶ້ນໄປ ຫຼື ຊາວປີ ສຳລັບເຂດຫ່າງໄກສອກຫຼີກ, ເຂດທຸລະກັນດານ.

ມາດຕາ 33 ຫຼຽນນາມມະຍົດແພດປະຊາຊົນ

ຫຼຽນນາມມະຍົດແພດປະຊາຊົນ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ແພດ ທີ່ມີຄຸນງາມຄວາມດີ, ມີຜົນງານດີເດັ່ນ, ມີຄຸນສົມບັດສິນທຳປະຕິວັດດີ, ມີຄຸນນະທຳ, ມີຫົວຄິດປະດິດສ້າງ, ມີນ້ຳໃຈຮັບໃຊ້ປະຊາຊົນ, ມີຈັນຍາບັນ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກມະຫາຊົນ, ເປັນແບບຢ່າງທີ່ດີ, ມີປະສົບການ ແລະ ໄດ້ຜ່ານຂະບວນການວຽກງານສາທາລະນະສຸກຢ່າງຕໍ່ເນື່ອງແຕ່ ຊາວປີ ຂຶ້ນໄປ ຫຼື ສິບຫ້າປີ ສຳລັບເຂດຫ່າງໄກສອກຫຼີກ, ເຂດທຸລະກັນດານ.

ມາດຕາ 34 ຫຼຽນນາມມະຍົດແມ່ພັດທະນາດີເດັ່ນ

ຫຼຽນນາມມະຍົດແມ່ພັດທະນາດີເດັ່ນ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ແມ່ ທີ່ມີຜົນງານດີເດັ່ນໃນການອອກແຮງງານ, ມີຫົວຄິດປະດິດສ້າງ, ມີຄວາມສາມາດໃນການຄົ້ນຄວ້າສິ່ງໃໝ່, ເປັນຕົວແບບໃນການຜະລິດ, ເປັນແບບຢ່າງທີ່ດີເດັ່ນ, ມີຄວາມຮູ້ຄວາມສາມາດໃນການພັດທະນາຕົນເອງ ແລະ ພັດທະນາສັງຄົມ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການແມ່ຍິງສາມດີ; ດຳເນີນທຸລະກິດມີການພັດທະນາ, ມີການຂະຫຍາຍຕົວ ແລະ ດຳເນີນຖືກຕ້ອງຕາມກົດໝາຍ.

ມາດຕາ 35 ນາມມະຍົດພັດທະນາດີເດັ່ນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ

ນາມມະຍົດພັດທະນາດີເດັ່ນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ເປັນນາມມະຍົດທີ່ມີຄຸນຄ່າສະເພາະ ຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ມອບໃຫ້ບຸກຄົນ ແລະ ການຈັດຕັ້ງ.

- ❖ ມາດຕະຖານຂອງບຸກຄົນ ແລະ ການຈັດຕັ້ງ ທີ່ຈະໄດ້ຮັບນາມມະຍົດພັດທະນາດີເດັ່ນຂອງກະຊວງ ອົງການ, ແຂວງ ແລະ ນະຄອນຫຼວງ ມີ ດັ່ງນີ້:

1. ຜູ້ທີ່ມີຜົນງານດີເດັ່ນ ໃນການອອກແຮງງານ, ມີຫົວຄິດປະດິດສ້າງ, ຜ່ານຜ່າຄວາມຫຍຸ້ງຍາກ, ຊື່ສັດບໍລິສຸດ, ມີຄວາມຮູ້, ມີຄວາມສາມາດໃນການຊີ້ນຳງພາ;
2. ເປັນການຈັດຕັ້ງ ທີ່ຖືກສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍ, ສ້າງໄດ້ຜົນງານດີເດັ່ນ, ເປັນແບບຢ່າງໃນການປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ, ເຮັດສຳເລັດໜ້າທີ່ວຽກງານ ແລະ ມີປະສິດທິພາບປະສິດທິຜົນ, ມີຂະບວນການແຂ່ງຂັນຢ່າງຕັ້ງໜ້າ ແລະ ເຂັ້ມແຂງ, ໜັກແໜ້ນ.

ມາດຕາ 36 ນາມມະຍົດພັດທະນາດີເດັ່ນຂອງເມືອງ, ເທດສະບານ, ນະຄອນ

ນາມມະຍົດພັດທະນາດີເດັ່ນຂອງເມືອງ, ເທດສະບານ, ນະຄອນ ເປັນນາມມະຍົດທີ່ມີຄຸນຄ່າສະເພາະຂອງເມືອງ, ເທດສະບານ, ນະຄອນ ມອບໃຫ້ບຸກຄົນ ແລະ ການຈັດຕັ້ງ ທີ່ສ້າງໄດ້ຜົນງານດີເດັ່ນໃນການອອກແຮງງານ, ມີຫົວຄິດປະດິດສ້າງ, ຜ່ານຜ່າຄວາມຫຍຸ້ງຍາກ, ປະຕິບັດພັນທະໃຫ້ລັດຖືກຕ້ອງຕາມກົດໝາຍມີຄວາມຊື່ສັດບໍລິສຸດ, ມີຄວາມຮູ້, ຄວາມສາມາດ, ມີປະສິດທິຜົນ ແລະ ເຮັດສຳເລັດໜ້າທີ່ວຽກງານ.

ມາດຕາ 37 ທຸງໄຊແຂ່ງຂັນຂອງລັດຖະບານ

ທຸງໄຊແຂ່ງຂັນຂອງລັດຖະບານ ເປັນທຸງໄຊແຂ່ງຂັນ ທີ່ມີຄຸນຄ່າສະເພາະ ຂອງລັດຖະບານ ແຫ່ງ ສປປ ລາວ ມອບໃຫ້ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການແຂ່ງຂັນອອກແຮງງານ, ມີຜົນສຳເລັດດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມດີເດັ່ນລື່ນຄາດໝາຍ; ມີຄວາມຊື່ສັດບໍລິສຸດ, ພາຍໃນກົມກອງມີຄວາມສາມັກຄີ, ປອດໃສ, ເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ, ເປັນແບບຢ່າງໃນການປະຢັດ, ບໍ່ມີການສໍ້ລາດບັງຫຼວງ ແລະ ບໍ່ມີສິ່ງຫຍໍ້ທໍ້ຕ່າງໆ.

ມາດຕາ 38 ທຸງໄຊແຂ່ງຂັນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ

ທຸງໄຊແຂ່ງຂັນຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ເປັນທຸງໄຊແຂ່ງຂັນທີ່ມີຄຸນຄ່າສະເພາະ ຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ມອບໃຫ້ການຈັດຕັ້ງ ທີ່ສ້າງໄດ້ຜົນງານດີເດັ່ນໃນການອອກແຮງງານ, ມີຫົວຄິດປະດິດສ້າງ, ປະຕິບັດພັນທະໃຫ້ລັດຖືກຕ້ອງຕາມກົດໝາຍ, ມີປະສິດທິຜົນ, ມີຄວາມຊື່ສັດບໍລິສຸດ, ເຮັດສຳເລັດໜ້າທີ່ວຽກງານລື່ນຄາດໝາຍ.

ມາດຕາ 39 ຫຼຽນກາພັດທະນາ

ຫຼຽນກາພັດທະນາ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ ທີ່ມີຜົນງານ, ຄຸນງາມຄວາມດີ ປະກອບສ່ວນຊ່ວຍເຫຼືອລ້າທາງດ້ານວັດຖຸ, ທຶນຮອນ, ເງິນຄຳເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ.

ມາດຕາ 40 ຫຼຽນກາແຮງງານ

ຫຼຽນກາແຮງງານ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ມີຜົນງານ, ຄຸນງາມຄວາມດີອຸທິດເຫື່ອແຮງ, ສະຕິປັນຍາ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ.

ມາດຕາ 41 ຫຼຽນກາມິດຕະພາບ

ຫຼຽນກາມິດຕະພາບ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງປະເທດ, ຊ່ຽວຊານ, ນັກການທູດ ທີ່ມີຜົນງານດີເດັ່ນ, ຄຸນງາມຄວາມດີປະກອບສ່ວນທາງດ້ານເຫື່ອແຮງ, ສະຕິປັນຍາເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີ ຕໍ່ ສປປ ລາວ.

ມາດຕາ 42 ຫຼຽນກາລະນຶກ

ຫຼຽນກາລະນຶກ ເປັນຫຼຽນທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ປະດັບ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານ, ຄຸນງາມຄວາມດີ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ;

ສຳລັບຫຼຽນກາລະນຶກບຸກຄົນ ສາມາດຜະລິດໄດ້ສະເພາະແຕ່ຫຼຽນຜູ້ນຳສູງສຸດຂອງປະເທດ, ສະຖານທີ່ສຳຄັນທາງປະຫວັດສາດ ທີ່ກົມການເມືອງສູນກາງພັກ ແລະ ລັດຖະບານ ຕົກລົງເຫັນດີ.

ມາດຕາ 43 ຫຼຽນກາລະນຶກກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ

ຫຼຽນກາລະນຶກຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ເປັນຫຼຽນທີ່ມີຄຸນຄ່າສະເພາະຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານ, ຄຸນງາມຄວາມດີ ປະກອບສ່ວນໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ແຕ່ ສາມສິບປີຂຶ້ນໄປ.

ມາດຕາ 44 ໃບປະເທດຊາດຈາລຶກບຸນຄຸນ

ໃບປະເທດຊາດຈາລຶກບຸນຄຸນ ເປັນໃບທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ມອບໃຫ້ບຸກຄົນ ທີ່ມີຜົນງານ, ຄຸນງາມຄວາມດີ, ເສຍສະຫຼະຊີວິດໃນພາລະກິດປົກປັກຮັກສາ ແລະພັດທະນາປະເທດຊາດ.

ມາດຕາ 45 ໃບຍ້ອງຍໍລັດຖະບານ

ໃບຍ້ອງຍໍລັດຖະບານ ເປັນໃບທີ່ມີຄຸນຄ່າສະເພາະ ຂອງ ສປປ ລາວ ມອບໃຫ້ບຸກຄົນ ແລະ ການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ມີຜົນງານ, ຄຸນງາມຄວາມດີ ອຸທິດເຫື່ອແຮງ, ສະຕິປັນຍາ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ.

ມາດຕາ 46 ໃບຍ້ອງຍໍ, ໃບຊົມເຊີຍຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ

ໃບຍ້ອງຍໍ, ໃບຊົມເຊີຍຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ ເປັນໃບທີ່ມີຄຸນຄ່າສະເພາະຂອງກະຊວງ, ອົງການ, ຂັ້ນແຂວງ ແລະ ຂັ້ນເມືອງ ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານ, ຄຸນງາມຄວາມດີ ປະກອບສ່ວນໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

## ໝວດທີ 5
## ຄວາມຮັບຜິດຊອບ ການແຂ່ງຂັນ, ຍ້ອງຍໍ ແລະ ສຶກຕຶກລິງການຍ້ອງຍໍ

ມາດຕາ 47 ຄວາມຮັບຜິດຊອບ ການແຂ່ງຂັນ ແລະ ຍ້ອງຍໍ

ຄວາມຮັບຜິດຊອບ ການແຂ່ງຂັນ ແລະ ຍ້ອງຍໍ ມີ ດັ່ງນີ້:

1. ກະຊວງພາຍໃນ ມີຄວາມຮັບຜິດຊອບໃນການພິຈາລະນາ, ກວດກາບັນດາເອກະສານ ທີ່ພົວພັນກັບວຽກງານການແຂ່ງຂັນ ແລະ ຍ້ອງຍໍ ໃຫ້ຄົບຖ້ວນ, ຖືກຕ້ອງ ເພື່ອນຳສະເໜີຂັ້ນເທິງພິຈາລະນາ, ພ້ອມກັນນັ້ນຕ້ອງລົງຊຸກຍູ້, ຕິດຕາມ, ກວດກາ, ຕີລາຄາ ແລະ ປະເມີນຜົນວຽກງານແຂ່ງຂັນ ແລະ ຍ້ອງຍໍແຕ່ລະໄລຍະ;
2. ລັດຖະມົນຕີກະຊວງ, ຫົວໜ້າອົງການ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ມີຄວາມຮັບຜິດຊອບໃນການຄົ້ນຄວ້າວາງແຜນການແຂ່ງຂັນ, ກຳນົດຈຸດປະສົງ, ຄາດໝາຍ, ເນື້ອໃນ, ຄຳຂວັນ, ມາດຕະຖານ ແລະ ໄລຍະເວລາຂອງການແຂ່ງຂັນ ແລະ ຍ້ອງຍໍ;
3. ກະຊວງ, ອົງການ ແລະ ທ້ອງຖິ່ນ ມີຄວາມຮັບຜິດຊອບ ດັ່ງນີ້:

- ຈັດຕັ້ງສ້າງຂະບວນການແຂ່ງຂັນ ໂດຍຕິດພັນກັບການອອກແຮງງານ, ການຜະລິດ, ປະຢັດມັດທະຍັດ, ປະດິດສ້າງ, ການຮ່ຳຮຽນ, ການປະຕິບັດວຽກງານວິຊາສະເພາະ, ການສູ້ຮົບ, ຮັບໃຊ້ສູ້ຮົບ ແນໃສ່ຮັບປະກັນໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
- ໂຄສະນາປຸກລະດົມຂົນຂວາຍທຸກອົງການຈັດຕັ້ງ, ທຸກພາກສ່ວນເສດຖະກິດ, ທຸກເຜົ່າຊົນ, ຊັ້ນຄົນຕ່າງໆເຂົ້າຮ່ວມຂະບວນການແຂ່ງຂັນ-ຍ້ອງຍໍ, ໂຄສະນາເຜີຍແຜ່ວຽກງານແຂ່ງຂັນ ແລະ ຍ້ອງຍໍ, ວຽກດີຄົນເດັ່ນ ແລະ ບັນດາຕົວແບບທີ່ກ້າວໜ້າ;
- ຕິດຕາມ, ກວດກາ, ຊຸກຍູ້ຂະບວນການແຂ່ງຂັນແຕ່ລະໄລຍະ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
- ປະເມີນຜົນ, ເລືອກເຟັ້ນ, ສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ;
- ສະເໜີຂໍການຍ້ອງຍໍ ແລະ ຈັດຕັ້ງ ຍ້ອງຍໍສັນລະເສີນບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນສຳເລັດໃນການແຂ່ງຂັນດີເດັ່ນໃນການອອກແຮງງານ, ການຜະລິດ, ການຄົ້ນຄວ້າ, ປະດິດສ້າງ ແລະ ການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

4. ຄະນະຊີ້ນໍາລະດັບຊາດ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍຮັກຊາດ ແລະ ພັດທະນາ ມີຄວາມຮັບຜິດຊອບ ຊີ້ນໍາຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານແຂ່ງຂັນ ແລະ ຍ້ອງຍໍ ໃນຂອບເຂດທົ່ວປະເທດ ແລະ ພິຈາລະນາການຍ້ອງຍໍຕາມພາລະບົດບາດ ຂອງຕົນ;
5. ກົມແຂ່ງຂັນ ແລະ ຍ້ອງຍໍ ກະຊວງພາຍໃນ ມີຄວາມຮັບຜິດຊອບ ດັ່ງນີ້:

- ເປັນເສນາທິການຊ່ວຍຂັ້ນເທິງ ໃນການຄົ້ນຄວ້າແຜນຍຸດທະສາດ, ຮູບແບບຄຸນລັກສະນະຂອງປະເພດການຍ້ອງຍໍ, ຄົ້ນຄວ້ານິຕິກໍາຕ່າງໆ ກ່ຽວກັບວຽກງານແຂ່ງຂັນ ແລະ ຍ້ອງຍໍ;
- ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານແຂ່ງຂັນ ແລະ ຍ້ອງຍໍ ໃນຂອບເຂດທົ່ວປະເທດ;
- ສະຫຼຸບຖອດຖອນບົດຮຽນ, ສະເໜີຮູບການຍ້ອງຍໍ ແລະ ສະເໜີປັບປຸງວຽກງານແຂ່ງຂັນ ແລະ ຍ້ອງຍໍ ໃນແຕ່ລະໄລຍະ.

6. ອົງການສື່ມວນຊົນ ມີຄວາມຮັບຜິດຊອບ ໂຄສະນາ, ເຜີຍແຜ່ວຽກງານແຂ່ງຂັນ ແລະ ຍ້ອງຍໍ, ອອກຂ່າວ ກ່ຽວກັບບົດຮຽນທີ່ດີເດັ່ນຂອງຂະບວນການແຂ່ງຂັນ ແລະ ຍ້ອງຍໍ ແລະ ຕົວແບບວຽກດີຄົນເດັ່ນ ໃນແຕ່ລະໄລຍະ.

### ມາດຕາ 48 ສິດຕົກລົງການຍ້ອງຍໍ

ສິດຕົກລົງການຍ້ອງຍໍ ມີ ດັ່ງນີ້ :

1. ປະທານປະເທດ ແຫ່ງ ສປປ ລາວ ຕົກລົງປະດັບ ຫຼື ມອບຫຼຽນຄໍາແຫ່ງຊາດ, ຫຼຽນໂພໄຊລ້ານຊ້າງ, ຫຼຽນກຽດຕິຄຸນ, ຫຼຽນໄຊອິດສະຫຼະ, ຫຼຽນໄຊຊະນະເລີດ, ຫຼຽນໄຊແຮງງານ, ຫຼຽນໄຊພັດທະນາ ແລະ ຫຼຽນໄຊມິດຕະພາບ, ຫຼຽນນາມມະຍົດວິລະຊົນແຫ່ງຊາດ, ຫຼຽນນາມມະຍົດວິລະຊົນແຮງງານ, ຫຼຽນນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ, ຫຼຽນນາມມະຍົດພັດທະນາດີເດັ່ນແຫ່ງຊາດ, ຫຼຽນນາມມະຍົດສິລະປິນແຫ່ງຊາດ, ຫຼຽນນາມມະຍົດຄູແຫ່ງຊາດ, ຫຼຽນນາມມະຍົດແພດແຫ່ງຊາດ;
2. ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕົກລົງປະດັບ ຫຼື ມອບຫຼຽນນາມມະຍົດສິລະປິນດີເດັ່ນ, ຫຼຽນນາມມະຍົດຄູປະຊາຊົນ, ຫຼຽນນາມມະຍົດແພດປະຊາຊົນ, ຫຼຽນນາມມະຍົດແມ່ພັດທະນາດີເດັ່ນ, ຫຼຽນກາແຮງງານ, ຫຼຽນກາພັດທະນາ, ຫຼຽນກາມິດຕະພາບ, ໃບຍ້ອງຍໍລັດຖະບານ, ໃບປະເທດຊາດຈາລຶກບຸນຄຸນ ແລະ ທຸງໄຊແຂ່ງຂັນລັດຖະບານ;
3. ລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ຕົກລົງມອບນາມມະຍົດ ຂັ້ນຂອງຕົນ, ໃບຍ້ອງຍໍ, ທຸງໄຊແຂ່ງຂັນ, ໃບຊົມເຊີຍ ແລະ ຫຼຽນກາລະນຶກຂອງກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ;
4. ລັດຖະມົນຕີກະຊວງປ້ອງກັນປະເທດ ຕົກລົງປະດັບ ຫຼື ມອບຫຼຽນໄຊພິລະອາດຫານ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
5. ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ເຈົ້ານະຄອນ ຕົກລົງມອບນາມມະຍົດ ຂັ້ນຂອງຕົນ, ໃບຍ້ອງຍໍ, ໃບຊົມເຊີຍ ຂັ້ນຂອງຕົນ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
6. ກະຊວງການຕ່າງປະເທດ ຫຼື ສະຖານເອກອັກຄະລັດຖະທູດລາວ ປະຈໍາຢູ່ບັນດາປະເທດ ມອບ ຫຼື ປະດັບການຍ້ອງຍໍໃຫ້ແກ່ບຸກຄົນ, ການຈັດຕັ້ງຂອງຕ່າງປະເທດຢູ່ປະເທດນັ້ນ ຕາມການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ;

7. ໃນກໍລະນີພິເສດ ລັດຖະບານ ແຫ່ງ ສປປ ລາວ ອາດຈະຕົກລົງຍ້ອງຍໍໂດຍບັງເອີນ ຫຼື ຕົກລົງການຍ້ອງຍໍ ເພື່ອຮັບໃຊ້ຄວາມຮຽກຮ້ອງຕ້ອງການດ້ານການເມືອງ, ການປ້ອງກັນຊາດ, ການປ້ອງກັນຄວາມສະຫງົບ ແລະ ວຽກງານທີ່ຮີບດ່ວນ.

## ໝວດທີ 6
## ຂັ້ນຕອນ ແລະ ເອກະສານປະກອບ ເພື່ອສະເໜີການຍ້ອງຍໍ

### ມາດຕາ 49 ຂັ້ນຕອນການສະເໜີຍ້ອງຍໍ

ຂັ້ນຕອນການສະເໜີຍ້ອງຍໍ ມີ ດັ່ງນີ້:

1. ຜ່ານຂະບວນການແຂ່ງຂັນ ແລະ ຍ້ອງຍໍຮັກຊາດ ແລະ ພັດທະນາ ຂອງຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ;
2. ຜ່ານຄະນະພັກ, ຄະນະນຳຂອງກະຊວງ, ອົງການ ແລະ ທ້ອງຖິ່ນ ສະເໜີລັດຖະມົນຕີກະຊວງພາຍໃນຄົ້ນຄວ້າພິຈາລະນາ ກ່ອນສະເໜີເຖິງນາຍົກລັດຖະມົນຕີ ຫຼື ປະທານປະເທດ ປະດັບ ຫຼື ມອບການຍ້ອງຍໍປະເພດຕ່າງໆ.

### ມາດຕາ 50 ເອກະສານປະກອບ

ເອກະສານປະກອບເພື່ອສະເໜີການຍ້ອງຍໍ ມີ ດັ່ງນີ້ :

1. ໃບສະເໜີຂອງລັດຖະມົນຕີກະຊວງ, ຫົວໜ້າອົງການ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ;
2. ປະຫວັດຫຍໍ້, ຜົນງານຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ບົດລາຍງານຂອງການຈັດຕັ້ງກ່ຽວກັບຜົນງານ ຂອງບຸກຄົນ ແລະ ການຈັດຕັ້ງ;
4. ບົດບັນທຶກ ແລະ ເອກະສານຢັ້ງຢືນຮັບຮອງ;
5. ສັນຍາການຊ່ວຍເຫຼືອລ້າ, ບົດວິພາກໂຄງການ, ຮູບພາບໂຄງການ ແລະ ຂໍ້ມູນຫຼັກຖານເອກະສານອ້າງອີງອື່ນ ໃນກໍລະນີສະເໜີຂໍຫຼຽນໄຊພັດທະນາ ແລະ ຫຼຽນກາພັດທະນາ;
6. ກໍລະນີສະເໜີການຍ້ອງຍໍບຸກຄົນ ແລະ ການຈັດຕັ້ງ ທີ່ມີສາຍຕັ້ງຕ້ອງມີຄຳເຫັນຢັ້ງຢືນ ຂອງລັດຖະມົນຕີກະຊວງ, ຫົວໜ້າອົງການທີ່ກ່ຽວຂ້ອງ ຫຼື ຄຳເຫັນຂອງເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 51 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ກີດຂວາງ ຂະບວນການແຂ່ງຂັນ;
2. ລາຍງານຜົນງານບິດເບືອນຈາກຄວາມເປັນຈິງ, ປອມແປງເອກະສານ ແລະ ໃຫ້ການຢັ້ງຢືນທີ່ຜິດກົດໝາຍ ເພື່ອສະເໜີການຍ້ອງຍໍ;
3. ຢືມວັດຖຸຍ້ອງຍໍຂອງບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອນຳໃຊ້ໃນທາງທີ່ຜິດກົດໝາຍ;
4. ໂຄສະນາ, ເຜີຍແຜ່ ທີ່ຂັດກັບແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ;
5. ສວຍໃຊ້ນະໂຍບາຍຕ່າງໆ ທີ່ມີຕໍ່ບຸກຄົນ, ຄອບຄົວທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ຕໍ່ວິລະຊົນແຫ່ງຊາດ, ຕໍ່ນັກຮົບແຂ່ງຂັນແຫ່ງຊາດ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ການຈັດຕັ້ງ;

6. ໃຫ້ ຫຼື ຮັບສິນບົນ, ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;
7. ອອກເອກະສານແຂ່ງຂັນ ແລະ ຍ້ອງຍໍ ທີ່ບໍ່ຖືກຕ້ອງ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 52 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ສະເໜີ ຫຼື ຕິກລົງການຍ້ອງຍໍຕໍ່ບຸກຄົນ ແລະ ການຈັດຕັ້ງ;
2. ຈັດຕັ້ງການແຂ່ງຂັນ ແລະ ຍ້ອງຍໍ ທີ່ມີລັກສະນະສວຍໃຊ້ຮູບການແຂ່ງຂັນ ແລະ ຍ້ອງຍໍ ເພື່ອຜົນປະໂຫຍດ ຂອງບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ;
3. ຟຸມເຟືອຍວັດຖຸ, ງົບປະມານຂອງລວມໝູ່ຂອງລັດ ຕໍ່ການແຂ່ງຂັນ ແລະ ຍ້ອງຍໍ;
4. ກົດໜ່ວງຖ່ວງດຶງເອກະສານ;
5. ຂໍເອົາ, ຮຽກເອົາ, ທວງເອົາ, ໃຫ້ ຫຼື ຮັບເອົາສິນບົນ;
6. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ປອມແປງ ຫຼື ອອກເອກະສານບໍ່ຖືກຕ້ອງ;
8. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈົນຍາບັນ ທີ່ກໍໃຫ້ເກີດຄວາມເສຍຫາຍຕໍ່ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງລັດ.

## ໝວດທີ 8
## ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ

ມາດຕາ 53 ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ

ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ ມີພາລະບົດບາດ ຄົ້ນຄວ້າ, ຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້ກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດວຽກງານແຂ່ງຂັນ ແລະ ຍ້ອງຍໍ ໃນຂອບເຂດທົ່ວປະເທດ.

ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ ມີ ດັ່ງນີ້:

1. ຄະນະຊີ້ນຳລະດັບຊາດ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ;
2. ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍຮັກຊາດ ແລະ ພັດທະນາ ຂັ້ນກະຊວງ, ອົງການ, ນະຄອນຫຼວງ ແລະ ຂັ້ນແຂວງ;
3. ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍຮັກຊາດ ແລະ ພັດທະນາ ຂັ້ນເມືອງ, ນະຄອນ ແລະ ເທດສະບານ.

ມາດຕາ 54 ຄະນະຊີ້ນຳລະດັບຊາດກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ

ຄະນະຊີ້ນຳລະດັບຊາດກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຖືກແຕ່ງຕັ້ງໂດຍປະທານປະເທດ ຊຶ່ງປະກອບດ້ວຍ ນາຍົກລັດຖະມົນຕີ ເປັນປະທານ, ລັດຖະມົນຕີກະຊວງພາຍໃນ ເປັນຮອງປະທານ, ລັດຖະມົນຕີກະຊວງ, ຫົວໜ້າອົງການ ເປັນຄະນະ, ມີພາລະບົດບາດເປັນເສນາທິການໃຫ້ສູນກາງພັກ

ແລະ ລັດຖະບານ ໃນການຄົ້ນຄວ້າ, ຕົກລົງບັນຫາທີ່ສຳຄັນກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ທັງຕິດຕາມ, ກວດກາ ແລະ ຊຸກຍູ້ ກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ;

ຄະນະຊີ້ນຳລະດັບຊາດ ການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ມີກົງຈັກຊ່ວຍວຽກຂອງຕົນ ໂດຍແມ່ນກະຊວງພາຍໃນ ເປັນກອງເລຂາ, ມີພາລະບົດບາດເປັນໃຈກາງປະສານງານ ແລະ ຊ່ວຍວຽກຄະນະຊີ້ນຳລະດັບຊາດ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ.

ມາດຕາ 55 ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຂັ້ນກະຊວງ, ຂັ້ນແຂວງ

ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຂັ້ນກະຊວງ, ຂັ້ນແຂວງ ຖືກແຕ່ງຕັ້ງໂດຍ ປະທານຄະນະຊີ້ນຳລະດັບຊາດ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຊຶ່ງປະກອບດ້ວຍ:

1. ຂັ້ນກະຊວງ ມີ ລັດຖະມົນຕີ, ຫົວໜ້າອົງການ ເປັນປະທານ;
2. ຂັ້ນແຂວງ ມີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນປະທານ.

ມາດຕາ 56 ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຂັ້ນເມືອງ

ຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຂັ້ນເມືອງ ຖືກແຕ່ງຕັ້ງໂດຍປະທານຄະນະຊີ້ນຳການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຂັ້ນແຂວງ ຊຶ່ງປະກອບດ້ວຍ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນປະທານ.

## ໝວດທີ 9
### ການຄຸ້ມຄອງ ແລະ ກວດກາ

ມາດຕາ 57 ອົງການຄຸ້ມຄອງການແຂ່ງຂັນ ແລະ ຍ້ອງຍໍ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ ຢ່າງລວມສູນ ແລະ ເປັນເອກະພາບ ໂດຍມອບໃຫ້ກະຊວງພາຍໃນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນ ແລະ ຍ້ອງຍໍ.

ອົງການຄຸ້ມຄອງການແຂ່ງຂັນ ແລະ ຍ້ອງຍໍ ປະກອບດ້ວຍ:

1. ກະຊວງພາຍໃນ;
2. ພະແນກພາຍໃນ ຂັ້ນແຂວງ;
3. ຫ້ອງການພາຍໃນ ຂັ້ນເມືອງ.

ມາດຕາ 58 ສິດ ແລະ ໜ້າທີ່ ຂອງກະຊວງພາຍໃນ

ໃນການຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ ກະຊວງພາຍໃນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ເພື່ອນຳສະເໜີລັດຖະບານ ຕົກລົງ ພ້ອມທັງໂຄສະນາ ແລະ ຈັດຕັ້ງປະຕິບັດ;
2. ຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ ໃນຂອບເຂດທົ່ວປະເທດ;
3. ຄົ້ນຄວ້າຮູບແບບຫຼຽນແຕ່ລະປະເພດ, ນາມມະຍົດ, ຫຼຽນລະນຶກ ແລະ ການສະເໜີຍ້ອງຍໍຕ່າງໆ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນ;

4. ບຳລຸງສ້າງພະນັກງານ, ໂຄສະນາ, ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດລະບຽບການແຂ່ງຂັນ ແລະ ຍ້ອງຍໍ;
5. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບຕີລາຄາການແຂ່ງຂັນ ແລະ ຍ້ອງຍໍ ແລະ ຄົ້ນຄວ້າຮູບການຍ້ອງຍໍ ນຳສະເໜີຂັ້ນເທິງ ເພື່ອພິຈາລະນາ;
6. ຄົ້ນຄວ້າພິຈາລະນາຄຳຮ້ອງ, ຄຳສະເໜີ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ;
7. ພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ;
8. ຂຶ້ນແຜນງົບປະມານຮັບໃຊ້ການແຂ່ງຂັນ ແລະ ຍ້ອງຍໍ ຂອງຄະນະຊີ້ນຳລະດັບຊາດ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ;
9. ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນ ແລະ ຍ້ອງຍໍ;
10. ຄຸ້ມຄອງວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນແຫ່ງຊາດ ໃນຂອບເຂດທົ່ວປະເທດ;
11. ສະຫຼຸບລາຍງານການເຄື່ອນໄຫວວຽກງານແຂ່ງຂັນ ແລະ ຍ້ອງຍໍ ຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

### ມາດຕາ 59 ສິດ ແລະ ໜ້າທີ່ ຂອງພະແນກພາຍໃນ ຂັ້ນແຂວງ

ໃນການຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ ພະແນກພາຍໃນແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນໃຈກາງຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ;
2. ຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ;
3. ຄົ້ນຄວ້າຮູບແບບຍ້ອງຍໍຕ່າງໆຂັ້ນແຂວງ;
4. ບຳລຸງສ້າງພະນັກງານ, ໂຄສະນາ, ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດລະບຽບການແຂ່ງຂັນ ແລະ ຍ້ອງຍໍ;
5. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບຕີລາຄາການແຂ່ງຂັນ ແລະ ຍ້ອງຍໍ ແລະ ຄົ້ນຄວ້າຮູບການຍ້ອງຍໍ ນຳສະເໜີຂັ້ນເທິງ ເພື່ອພິຈາລະນາ;
6. ຄົ້ນຄວ້າພິຈາລະນາຄຳຮ້ອງ, ຄຳສະເໜີ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ;
7. ຂຶ້ນແຜນງົບປະມານຮັບໃຊ້ການແຂ່ງຂັນ ແລະ ຍ້ອງຍໍ;
8. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນ ແລະ ຍ້ອງຍໍ;
9. ຄຸ້ມຄອງວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນແຫ່ງຊາດ;
10. ສະຫຼຸບລາຍງານການເຄື່ອນໄຫວວຽກງານແຂ່ງຂັນ ແລະ ຍ້ອງຍໍ ຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

### ມາດຕາ 60 ສິດ ແລະ ໜ້າທີ່ ຂອງຫ້ອງການພາຍໃນ ຂັ້ນເມືອງ

ໃນການຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ;
2. ຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ;
3. ຄົ້ນຄວ້າຮູບແບບໃບຍ້ອງຍໍຕ່າງໆ ຂັ້ນເມືອງ;
4. ບໍາລຸງສ້າງພະນັກງານ, ໂຄສະນາ, ເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດລະບຽບການແຂ່ງຂັນ ແລະ ຍ້ອງຍໍ;
5. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບຕີລາຄາການແຂ່ງຂັນ ແລະ ຍ້ອງຍໍ ແລະ ຄົ້ນຄວ້າຮູບການຍ້ອງຍໍ ນໍາສະເໜີຂັ້ນເທິງ ເພື່ອພິຈາລະນາ;
6. ຄົ້ນຄວ້າພິຈາລະນາຄໍາຮ້ອງ, ຄໍາສະເໜີ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ;
7. ຂຶ້ນແຜນງົບປະມານຮັບໃຊ້ການແຂ່ງຂັນ ແລະ ຍ້ອງຍໍ;
8. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນ ແລະ ຍ້ອງຍໍ;
9. ຄຸ້ມຄອງວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນແຫ່ງຊາດ;
10. ສະຫຼຸບລາຍງານການເຄື່ອນໄຫວວຽກງານແຂ່ງຂັນ ແລະ ຍ້ອງຍໍ ຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ.

ມາດຕາ 61 ອົງການກວດກາ

ອົງການກວດກາວຽກງານແຂ່ງຂັນ ແລະ ຍ້ອງຍໍ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານແຂ່ງຂັນ ແລະ ຍ້ອງຍໍ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 57 ຂອງດໍາລັດສະບັບນີ້;
2. ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກ ຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ.

ມາດຕາ 62 ຮູບການການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຊາບລ່ວງໜ້າ;

ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ;

ການກວດກາໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

ມາດຕາ 63 ເນື້ອໃນການກວດກາ

ການກວດກາວຽກງານແຂ່ງຂັນ ແລະ ຍ້ອງຍໍ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ;
2. ການປະຕິບັດໜ້າທີ່, ຄວາມຮັບຜິດຊອບ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການສ້າງ ແລະ ປະຕິບັດແຜນການ, ແຜນງານ ແລະ ໂຄງການກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ.

## ໝວດທີ 10
## ງົບປະມານສໍາລັບວຽກງານແຂ່ງຂັນ ແລະຍ້ອງຍໍ

ມາດຕາ 64 ງົບປະມານ

ງົບປະມານສໍາລັບວຽກງານແຂ່ງຂັນ ແລະ ຍ້ອງຍໍ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
3. ແຫຼ່ງອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ມາດຕາ 65 ເປົ້າໝາຍການນໍາໃຊ້

ງົບປະມານ ສໍາລັບວຽກງານແຂ່ງຂັນ ແລະ ຍ້ອງຍໍ ຖືກນໍາໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ການເຄື່ອນໄຫວວຽກງານ ຫຼື ກິດຈະກໍາ ຕາມແຜນການ, ແຜນງານ, ໂຄງການຂອງການແຂ່ງຂັນ ແລະ ຍ້ອງຍໍ;
2. ການປະຕິບັດນະໂຍບາຍ ແລະ ວຽກງານອື່ນ ກ່ຽວກັບການແຂ່ງຂັນ ແລະ ຍ້ອງຍໍ ຕາມລະບຽບການ.

ມາດຕາ 66 ການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ

ຂະແໜງການພາຍໃນ ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ ກ່ຽວກັບວຽກງານແຂ່ງຂັນ ແລະ ຍ້ອງຍໍຕາມກົດໝາຍວ່າ ດ້ວຍງົບປະມານແຫ່ງລັດ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 67 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດໍາລັດ ສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 68 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກ ຫຼື ການຈັດຕັ້ງ ທີ່ລະເມີດດໍາລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ລົງວິໄນປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 12
### ບົດບັນຍັດສຸດທ້າຍ

**ມາດຕາ 69 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງພາຍໃນ ເປັນໃຈກາງສົມທົບກັບກະຊວງ, ອົງການ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

**ມາດຕາ 70 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍໃນໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍ ການເຜີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍ ໃນໄລຍະໃໝ່ ສະບັບເລກທີ 121/ນຍ, ລົງວັນທີ 24 ກຸມພາ 2010.

ນາມມະຍົດ ແລະ ການຍ້ອງຍໍຕ່າງໆ ທີ່ໄດ້ປະດັບ ຫຼື ມອບກ່ອນດຳລັດສະບັບນີ້ ຖືກປະກາດໃຊ້ ແມ່ນບໍ່ມີການປ່ຽນແປງ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ ແຫ່ງ ສ ປ ປ ລາວ
ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ... ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ